ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 075 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 25 SEP 2020

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ, ໂຮງພິມ ພາກລັດ ແລະ ເອກະຊົນ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາຜະລິດປະຕິທິນ ປະຈໍາປີ 2021.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ໂຮງພິມ ພາກລັດ ແລະ ເອກະຊົນ ເພື່ອເຂົ້າຮ່ວມການປະມູນລາຄາປະຕິທິນປະຈໍາປີ 2021 ພາຍໃຕ້ຫົວຂໍ້ **" ວິຖີຊີວິດແບບໃໝ່ທີ່ຕິດພັນກັບຜະລິດຕະພັນ ທຄຕລ"** ທີ່ ທຄຕລ ໄດ້ອອກແບບ ແລະ ກໍານົດສະເປັກຕາມລາຍລະອຽດລຸ່ມນີ້:

1. ຈໍານວນການຜະລິດປະຕິທິນ:
   - ປະຕິທິນແຂວນຝາ ຈໍານວນ 120.000 ສະບັບ ພ້ອມກ່ອງຫຸ້ມຫໍ່;
   - ປະຕິທິນຕັ້ງໂຕະ ຈໍານວນ 80.000 ສະບັບ ພ້ອມກ່ອງຫຸ້ມຫໍ່;
   - ປະຕິທິນຕັ້ງໂຕະ VIP (ແບບໄມ້ແກະສະຫລັກ) ຈໍານວນ 20.000 ອັນ ພ້ອມກ່ອງຫຸ້ມຫໍ່;
2. ລາຍລະອຽດກ່ຽວກັບສະເປັກປະຕິທິນ (ແຂວນຝາ, ຕັ້ງໂຕະ ແລະ ປະຕິທິນຕັ້ງໂຕະ VIP): ກໍານົດຂະໜາດ, ແມ່ສີ ແລະ ວັດສະດຸ, ກອງບັນຈຸປະຕິທິນ ລຽລ ອີງຕາມຕາຕະລາງລຸ່ມນີ້:

| No | ລາຍການ | ພາບປະກອບ | ຄຸນລັກສະນະ |
|---|---|---|---|
| 1 | ປະຕິທິນ ແຂວນຝາ |  | **ປະຕິທິນແຂວນຝາ**<br>**ຂະໜາດ: 40*60 ຊ.ມ**<br>- ນໍ້າໜັກເຈ້ຍ 200 ກຣາມ<br>- ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ, ລວມໜ້າປົກ<br>- ພິມ 4 ສີ<br>- ໃສ່ປ່ອງດູກງູເຫຼັກເບົາ ຂະໜາດ 40 ຊ.ມ ເທິງຫົວປະຕິທິນແຂວນຝາ<br>- ພິມດ້ວຍເຄື່ອງພິມຄຸນນະພາບສູງ |
| 2 | ການຫຸ້ມຫໍ່ ປະຕິທິນ | | **ການຫຸ້ມຫໍ່**<br>- ຫຸ້ມຫໍ່ດ້ວຍກ່ອງເຈ້ຍ ແລະ ຖົງຢາງແບບກະທັດຮັດ<br>- ນໍ້າໜັກເຈ້ຍຫຸ້ມຫໍ່ (ເຈ້ຍອາດກາດ) 250 ກຣາມ<br>- ພິມໂລໂກ້ລົງໜ້າກ່ອງ ຫຼື ສະຕິກເກີ 01 ອັນ<br>- ຂະໜາດເບິ່ງຕາມເອກະສານຕິດຄັດ |



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | | |
|---|---|---|---|
| 3 | ປະຕິທິນ ຕັ້ງໂຕະ |  | **ປະຕິທິນຕັ້ງໂຕະ**<br>- ຂະໜາດຂາຕັ້ງປະຕິທິນ 23 x 21cm/1.200gsm ນໍ້າໜັກເຈ້ຍຂາຕັ້ງ<br>❖ **ກະດາດກ່ອງໂນດສີຂາວ ນໍ້າໜັກ 350gsm**<br>- ພິມ 7 ໃບ/ 14 ໜ້າ<br>- ໜ້າປະຕິທິນຂະໜາດ 23 x 16.5cm<br>- ນໍ້າໜັກເຈ້ຍ 230 gsm<br>- ພິມ 4 ສີ/ 2 ໜ້າ<br>- ໃສ່ບ່ວງດູກງູເຫຼັກເບົາເຕັມຫົວ<br>❖ **ກະດາດໂນດ 50 ໃບ**<br>- ຂະໜາດ 8.5 x 8.5 cm<br>- ນໍ້າໜັກ 80 gsm<br>- ກ່ອງເຈ້ຍໂນດ: ນໍ້າໜັກ 230 gsm<br>- ພິມ 4 ສີ 1 ເຊັດ , 01 ດ້ານ |
| 4 | ການຫຸ້ມຫໍ່ ປະຕິທິນ | | ❖ **ກ່ອງເຈ້ຍປະຕິທິນຕັ້ງໂຕະຂະໜາດກະທັດຮັດ**<br>- ກ່ອງກະດາດຫຸ້ມຫໍ່ (ເຈ້ຍອາດກາດ) 250 gsm<br>- ພິມອ໊ອຟເຊັດ 4 ສີ, 1ດ້ານ<br>- ຂະໜາດເບິ່ງຕາມເອກະສານຕິດຄັດ |
| 5 | **ປະຕິທິນຕັ້ງໂຕະພຣີມ້ຽມ VIP** |  | **ປະຕິທິນຕັ້ງໂຕະພຣີມ້ຽມ VIP**<br>- ຂະໜາດ: 27 x 13.5cm<br>- ໄມ້ສົນເນື້ອເບົາ<br>- ສະລັກໂລໂກ້ດ້ານໜ້າ<br>- ບ່ອນຕັ້ງບິກສອງຈຸດ ແລະ ພື້ນທີ່ສໍາລັບໃສ່ເຈ້ຍໂນດ<br>- ເຄືອບສີໄມ້ PU<br>❖ **ປະຕິທິນ**<br>- ພິມ 7 ໃບ/ 14 ໜ້າ, ຂະໜາດ20 x 11.5cm<br>- ນໍ້າໜັກ 230gsm<br>- ພິມ 4 ສີ 1 ເຊັດ , 01 ດ້ານ<br>- ໃສ່ບ່ວງດູກງູເຫຼັກເບົາເຕັມຫົວ<br>❖ **ເຈ້ຍໂນດ (ທີ່ສາມາດຕິດ ແລະ ລອກອອກໄດ້)**<br>- 6.8 x 10.8cm<br>- Fort 80 gsm<br>- ພິມ 4 ສີ 1 ເຊັດ , 01 ດ້ານ |
| 6 | ການຫຸ້ມຫໍ່ ປະຕິທິນ | | ກ່ອງເຈ້ຍປະຕິທິນຕັ້ງໂຕະຂະໜາດກະທັດຮັດ<br>- ກ່ອງກະດາດຫຸ້ມຫໍ່ ນໍ້າໜັກ 230<br>- ພິມ 4 ສີ 1 ເຊັດ, 01 ດ້ານ |

❖ **<u>ໝາຍເຫດ:</u>** ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການໃຫ້ສົ່ງຮູບພາບເພີ່ມເຕີມ ຫຼື VIDEO ຂອງປະຕິທິນຕົວຈິງສາມາດພົວພັນໄດ້ທີ່ ທະນາຄານການຄ້າຕ່າງປະເທດລາວ ສນຍ ຊັ້ນ4 ຕຶກ C.

**ເງື່ອນໄຂຂອງຜູ້ສະໜອງ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບມີດັ່ງນີ້:**

1. ປະກອບເອກະສານຢັ້ງຢືນການດຳເນີນທຸລະກິດຢ່າງໜ້ອຍ 02 ປີຂຶ້ນໄປ ພ້ອມສຳເນົາໃບທະບຽນວິສາຫະກິດທີ່ລະບຸປະເພດທຸລະກິດສິ່ງພິມ, ໃບຢັ້ງຢືນການເສຍອາກອນປີ 2019 ຫຼື ມີເອກະສານທີ່ກ່ຽວຂ້ອງທີ່ສະແດງເຖິງຜົນງານທີ່ເຄີຍຜະລິດຜ່ານມາໃຫ້ພາກສ່ວນອື່ນ ພ້ອມທັງຄັດຕິດຕົວຢ່າງຂອງວັດຖຸດິບແທ້ມາພ້ອມ.
2. ໃບສະເໜີລາຄາໃຫ້ລະບຸລາຄາ/ຫົວໜ່ວຍ ແລະ ລວມອາກອນມູນຄ່າເພີ່ມ 10% (ມີບິນອາກອນຄືວຖ້ວນ) ທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
3. ໃນວັນທີ **15/10/2020ເວລາ 09:30** ໂມງ ແມ່ນມື້ເປີດຊອງປະມູນ ເຊິ່ງຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງຊ່ອງໜ້າກັບຄະນະກຳມະການ).
4. ຜູ້ສະໜອງຕ້ອງກຳນົດລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
5. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/11/2020) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>** ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

**ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 20% ຂອງມູນຄ່າ ພາຍຫຼັງທີ່ ເຊັນສັນຍາສຳເລັດເປັນທີ່ຮຽບຮ້ອຍແລ້ວ.

* ງວດທີ 2: ຊຳລະ 80% ຂອງມູນຄ່າ ພາຍຫຼັງສົ່ງເຄື່ອງຄົບຕາມຈຳນວນ ແລະກວດກາຄວາມຖືກຕ້ອງຮອບດ້ານ. ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍບໍ່ແກ້ໄຂ ຫຼື ປ່ຽນແທນສິນຄ້າທີ່ມີຕຳໜິ (ບໍ່ໄດ້ມາດຕະຖານ) ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ປະທານຄະນະກຳມະການປະມູນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

ສອບຖາມລາຍລະອຽດເພີ່ມເຕີມ: bidcommittee@bcel.com.la

ຮູບພາບຕົວຢ່າງສິນຄ້າ:

Tờ note 8.5cm x 8.5cm

ເຈ້ຍ **NOTE**
ສຳລັບປະຕິທິນຕັ້ງໂຕະ














Tờ note 6.8cm x 10.8cm

ຮູບຕົວຢ່າງເຈ້ຍ **NOTE**
ສຳລັບປະຕິທິນຕັ້ງໂຕະພິມ້ຽມ **VIP**















ຮູບ ກ່ອງຂອງປະຕິທິນແຂນຝາ







ຮູບ ກ່ອງຂອງປະຕິທິນຕັ້ງໂຕະ